# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 31 ມະກະຣາ 2021 (01-31-2021)

---

## ການຮູ້ຈັກພຣະເຈົ້າ

*ຍາມໃດການບອກທາງຫຼືຄຳແນະນຳພາໄປທາງຜິດຢ່າງຮ້າຍແຮງ?*

**ຈຸດສຳຄັນໃນບົດຮຽນ:** ຫົວໃຈຂອງເຮົາພໍໃຈເມື່ອເຮົາພົບພຣະເຈົ້າທາງພຣະຄຳພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ພວກເຮົາສ່ວນຫຼາຍກາຍເປັນຜູ້ເພິ່ງອາສັຍ GPS. ເຫດໃດຊິບໍ່ອາສັຍ? GPS ບອກທາງທຸກບ່ອນທີ່ເຮົາຢາກໄປ, ເຮົາບໍ່ຈຳເປັນແນມອອກໄປບອກທາງ. ມັນຍິ່ງມີຄວາມສຳຄັນຂຶ້ນຍາມເຮົາຕົກຢູ່ໃນບ່ອນທີ່ເຮົາບໍ່ຄຸ້ນເຄີຍໃນຍາມອັຕຂັດ.

ຍິງຊາວການາດາຜູ້ນຶ່ງອາດບໍ່ເຫັນພ້ອມ. ນາງຕົກຢູ່ໃນບ່ອນບໍ່ຄຸ້ນເຄີຍໃນເມືອງອອນຕາຣີໂອ ໃນຍາມ "ກາງຄືນມືດແລະພາຍຸຮ້າຍ," ເວລານາງຂັບເຮືອລົງໃຕ້ມຸ່ງສູ່ອ່າວຈໍຈຽນ, ນາງພົບວ່າ GPS ຂອງນາງອາດເພິ່ງບໍ່ໄດ້ດັ່ງທີ່ຄິດເສັຽແລ້ວ. ນາງໄດ້ເຮັດຕາມທຸກຢ່າງທີ່ GPS ບອກ, ແຕ່ GPS ບອກຜິດ. ນາງອອກຈາກນ້ຳທີ່ໜາວຈັດມາໄດ້ຢ່າງປອດພັຍຫວັງວ່າລົດຂອງນາງຄົງບໍ່ບອກຜິດໃນທຳນອງດຽວກັນນັ້ນ.

ຂອບພຣະຄຸນຢ່າງຍິ່ງທີ່ພວກເຮົາສາມາດເພິ່ງທິດທາງພຣະຄັມພີບອກໄດ້ຕລອດບໍ່ມີພາດ. ຊຶ່ງເປັນທີ່ເພິ່ງຂອງເຮົາໄດ້ຕລອດແລະຈະບໍ່ພາເຮົາໄປໃນທາງຜິດຈັກເທື່ອ. ເພງສັຣເສີນ 119 ເປັນຄຳແນະນຳຂອງພຣະເຈົ້າຊຶ່ງເປັນວິທີປະຕິບັດທີ່ເຂົ້າໃຈງ່າຍແລະ ໃນເພງສັຣເສີນບົດນີ້ພວກເຮົາເຫັນວ່າພຣະຄັມພີຜລິດການເຕີບໃຫຍ່ຝ່າຍວິນຍານຢ່າງໃດ, ຕຽມເຮົາເພື່ອປະເຊີນໜ້າກັບຄູ່ຕໍ່ສູ້, ແລະໃຫ້ວິສັຍທັດທີ່ເພິ່ງໄດ້ໃນການດຳເນີນຊີວິດຂອງເຮົາຕໍ່ໄປ.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

### 1. ເພງສັຣເສີນ 119:17-18.

*17 ໂຜດດີແກ່ຂ້າພຣະອົງດ້ວຍ ຄືຜູ້ຮັບໃຊ້ຂອງພຣະອົງ ເພື່ອຈະມີຊີວິດຢູ່ແລະເຊື່ອຟັງຂໍ້ຄຳສັ່ງສອນ. 18 ໂຜດເປີດຕາ*
*ດ້ວຍເພື່ອຂ້າພຣະອົງຈະໄດ້ເຫັນຄວາມຈິງອັນປະຫຼາດໃຈຢູ່ໃນພຣະບັນຍັດນັ້ນ.*

ເພງສັຣເສີນບົດ 119 ແມ່ນບົດກະວີອັສຈັນບົດນຶ່ງຂອງຊາວເຮັບເຣີ. ບົດເພງສັຣເສີນມີຊາວສອງໝວດ-ໝວດນຶ່ງຕໍ່ຕົວອັກສອນນຶ່ງຂອງພຍັນຊນະພາສາເຮັບເຣີ. ແຕ່ລະໝວດມີແປດແຖວ ຊຶ່ງເລີ່ມຕົ້ນດ້ວຍອັກສອນຕົວດຽວກັນ. ຜູ້ແຕ່ງເພງສັຣເສີນປະສົມປະສານໝວດເຫຼົ່ານີ້ເຂົ້າກັນ ເພື່ອຜູ້ນະມັສການສາມາດສະທ້ອນພູມປັນຍາໃນການຍອມຈຳນົນຕໍ່ຄຳສັ່ງສອນຂອງອົງພຣະຜູ້ເປັນເຈົ້າ.

ເພງສັຣເສີນ 119:17-24 ແມ່ນໝວດທີ່ສາມ (ຮຽກວ່າໝວດ**ກິເມນ**ຫຼັງຈາກອັກສອນທີ່ສາມຂອງພຍັນຊນະເຮັບເຣີ), ແລະມັນໄດ້ສ່ອງຄວາມຮັກອັນແຮງກ້າຂອງພຣະຄັມພີອອກມາ. ຜູ້ປະພັນເພງອ້ອນວອນຂໍຄວາມເມດຕາຈາກພຣະເຈົ້າເພື່ອເພິ່ນຈະ "ມີຊີວິດຢູ່" ແລະ "ຮັກສາຂໍ້ຄຳສັ່ງຂອງພຣະອົງ." ຜູ້ປະພັນເພງສັຣເສີນມີຊີວິດເພື່ອເຊື່ອຟັງພຣະຄຳຂອງພຣະເຈົ້າ. ການກ່າວຊ້ຳຄວາມຄິດຂອງຜູ້ປະພັນດ້ວຍຄຳຂນານກັນ ແມ່ນຜູ້ຊຸນຢາກເນັ້ນການເຊື່ອຟັງ. ເປົ້າໝາຍບໍ່ແມ່ນເພື່ອຮູ້ຈັກ ແລະເຂົ້າໃຈຄຳສັ່ງສອນຂອງພຣະເຈົ້າເທົ່ານັ້ນ; ແຕ່ແມ່ນເພື່ອດຳເນີນຊີວິດ, ຮັກສາ, ແລະເຊື່ອຟັງຄຳສັ່ງສອນນັ້ນ.

ຜູ້ແຕ່ງເພງສັຣເສີນບໍ່ໄດ້ເບິ່ງການເຊື່ອຟັງຂອງລາວເໝືອນວ່າເປັນຂໍ້ບັງຄັບທີ່ຍາກແຕ່ຢ່າງໃດ. ຫຼືບໍ່ເໝືອນເພິ່ນກຳລັງຕີເວລາອອກການຝ່າຍວິນຍານຂນະທີ່ຝັນຫວານຫາສິ່ງທີ່ສນຸກສນານກວ່າ. ຜູ້ຂຽນເພງສັຣເສີນບໍ່ໄດ້ຍົກໃຫ້ເຫັນພຣະຄຳພຣະເຈົ້າໝາຍເຖິງການເຮັດໃຫ້ຊີວິດຂອງເພິ່ນດີຂຶ້ນເທົ່ານັ້ນ. ຢາກໃຫ້ເຫັນວ່າພຣະດຳຣັດແມ່ນເຫດຜົນສຳລັບຊີວິດ.

ການອ່ານພຣະຄັມພີແຕ່ລະວັນຈະຊ່ອຍເຮັດໃຫ້ທ່ານເຕີບໃຫຍ່ຝ່າຍວິນຍານດີກວ່າທາງເລືອກອື່ນທີ່ທ່ານສາມາດທຳໄດ້. ມັນແມ່ນພື້ນຖານຂອງວິນັຍຝ່າຍວິນຍານຊຶ່ງຄົນອື່ນໆໄດ້ຍຶດໝັ້ນ. ນອກຈາກຜົນປໂຍດໂດຍກົງຂອງການພົບປະພຣະເຈົ້າໃນເວລາທ່ານອ່ານພຣະຄັມພີແລ້ວ, ຄວາມເຂົ້າໃຈທີ່ເຜີຍໃຫ້ເຫັນຕລອດຊີວິດຈະໃຫ້ໂຄງຮ່າງສຳລັບວິນັຍຝ່າຍວິນຍານອື່ນໆດ້ວຍ. ການເຂົ້າໃຈນ້ຳພຣະທັຍພຣະເຈົ້າຂອງທ່ານ, ດັ່ງທີ່ໄດ້ເປີດເຜີຍໃນພຣະຄັມພີ, ຈະຊ່ອຍທ່ານຈຳແນກຣະຫວ່າງສຽງຂອງພຣະເຈົ້າແລະອິດທິພົນອື່ນໆ.

| ເມື່ອໃດພຣະເຈົ້າປະກົດຕົວໃຫ້ທ່ານເຫັນຜ່ານທາງພຣະຄຳພຣະອົງ? |
|---|

ຜູ້ຂຽນເພງສັຣເສີນໄຫວ້ວອນຂໍໃຫ້ອົງພຣະຜູ້ເປັນເຈົ້າເປີດຕາຂອງເພິ່ນເພື່ອເພິ່ນຈະໄດ້ເຫັນຄວາມຈິງອັນວິເສດຢູ່ໃນຄຳສັ່ງສອນຂອງພຣະບັນຍັດ. ພວກເຮົາໄດ້ອ່ານຖ້ອຍຄຳອັນແຮງກ້າໃນຄຳເວົ້າຂອງເພິ່ນ-ເພິ່ນປາຖນາຢ່າງແຮງກ້າທີ່ຈະໄດ້ພົບພຣະເຈົ້າໂດຍທາງພຣະທັມພຣະອົງ. ເພິ່ນບໍ່ຢາກໃຫ້ຄວາມຢ້ານກົວຂອງຊີວິດດຶງເພິ່ນອອກຈາກສິ່ງທີ່ສຳຄັນທີ່ສຸດ. ຍ້ອນວ່າເພິ່ນມີໃຈເປີດ, ເພິ່ນຈຶ່ງຮ້ອງໄຫ້ຂໍພຣະເຈົ້າເປີດຕາເພິ່ນເພື່ອພຣະເຈົ້າຈະໄດ້ເປີດເຜີຍຄວາມຈິງຂອງພຣະອົງໃຫ້ເພິ່ນເຫັນຈາກພຣະຄຳ. ໃນເມື່ອມີບາງຄົນເທົ່ານັ້ນທີ່ໄດ້ຍິນສຽງຈິງຂອງພຣະເຈົ້າ, ທຸກຄົນສາມາດໄດ້ຍິນ "ສຽງ" ຂອງພຣະເຈົ້າຕຣັດຜ່ານທາງພຣະຄຳຂອງພຣະອົງ. ການແປທາງພຣະຄັມພີແມ່ນວິທຍາສາດ, ແລະມັນຕ້ອງອອກແຮງເພື່ອແປແລະອະທິບາຍພາກທີ່ຍາກໃຫ້ລະອຽດ, ແຕ່ຄວາມພະຍາຍາມນັ້ນບໍ່ພຽງພໍ. ການເຂົ້າໃຈພຣະຄຳພຣະເຈົ້າແມ່ນງານຝ່າຍວິນຍານ ຕ້ອງການພຣະວິນຍານບໍຣິສຸດສ່ອງສວ່າງຄວາມໝາຍໃຫ້ຜູ້ອ່ານ (1 ໂກຣິນໂທ 12:1-14). ຜູ້ຂຽນເພງສັຣເສີນຢາກໄດ້ຍິນຈາກພຣະເຈົ້າ, ແຕ່ ເພິ່ນອະທິຖານໃຫ້ພຣະເຈົ້າເປີດຕາຂອງເພິ່ນໃຫ້ເຫັນສິ່ງທີ່ພຣະອົງປະກົດທາງພຣະຄຳຂອງພຣະອົງ.

## 2. <u>ເພງສັຣເສີນ 119:19-22</u>.

*19 ຂ້າພຣະອົງເປັນຄົນພະເນຈອນເທິງແຜ່ນດິນໂລກ ຂໍຢ່າຊົງເຊື່ອງພຣະບັນຍັດຂອງພຣະອົງຈາກຂ້າພຣະອົງເສັຽ.*
*20 ຈິດໃຈຂອງຂ້າພຣະອົງກໍລະທົມທຸກດ້ວຍຄຳນຶງເຖິງກົດຫມາຍຂອງພຣະອົງຕລອດເວລາ. 21 ພຣະອົງຊົງຂະ*
*ໜາບຄົນຈອງຫອງ ສາບແຊ່ງຄົນບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ. 22 ຂໍຊົງນຳການດ່າ ແລະການປະໝາດໄປ*
*ຈາກຂ້າພຣະອົງ ເພາະຂ້າພຣະອົງໄດ້ຮັກສາບັນດາພຣະໂອວາດຂອງພຣະອົງ.*

ການໄດ້ຍິນຈາກພຣະເຈົ້າເປັນສິ່ງສຳຄັນສຳລັບຜູ້ຂຽນເພງສັຣເສີນ, ໂດຍສະເພາະ ຕັ້ງແຕ່ເພິ່ນຮູ້ວ່າໂລກອ້ອມຂ້າງບໍ່ເປັນບ່ອນທີ່ເປັນມິດສເມີ. ຫຼັງຈາກໄດ້ຮັບການຊະໂລມວິນຍານຂອງເພິ່ນດ້ວຍຄຳແນະນຳຂອງອົງພຣະຜູ້ເປັນເຈົ້າ, ຜູ້ແຕ່ງເພງສັຣເສີນໄດ້ເຫັນໂລກເຕັມດ້ວຍບາບຄືກັບວ່າເປັນຄົນຕ່າງດ້າວສຳລັບເພິ່ນ. ເພິ່ນຊີ້ແຈງວ່າເພິ່ນເປັນ "ຄົນຕ່າງດ້າວໃນໂລກ," ເປັນຄົນພັກອາສັຍຊົ່ວຄາວຊຶ່ງເພິ່ນຮູ້ສຶກວ່າເພິ່ນບໍ່ໄດ້ເປັນຄົນຂອງໂລກ; ເໝືອນກັບວ່າເພິ່ນເປັນຄົນນອກ. ຄົນແປກໜ້າຫຼືຄົນຕ່າງດ້າວໂດຍສະເພາະເປັນເປົ້າໂຈມຕີໄດ້ງ່າຍໃນພາກຕາເວັນອອກໃກ້ຄຽງສມັຍກ່ອນ. ໂດຍປາສຈາກຄວາມເມດຕາຈາກຄົນອື່ນ, ພວກເຂົາບໍ່ອາດມີອາຫານ, ບ່ອນຢູ່, ຫຼືນ້ຳ. ເມືອງທີ່ບໍ່ມີໂຄງສ້າງພື້ນຖານທັນສມັຍສຳລັບການຂົນສົ່ງ, ເຄຫາສະຖານ ຫຼືພັດຕາຄານ. ຖ້າຄົນດີ, ມີນ້ຳໃຈບໍ່ໃຫ້ການຄຸ້ມກັນພວກເຂົາແລະບໍ່ໃຫ້

ການຕ້ອນຮັບເຂົ້າບ້ານ, ຄົນແປກໜ້າອາດຖືກກຸ່ມປະທ້ວງ(Mop)ຂັບໄລ່.

ຜູ້ແຕ່ງເພງສັຣເສີນປາຖນາມີຊີວິດຢູ່ໃນການເຊື່ອຟັງພຣະຄໍາພຣະເຈົ້າ; ເພາະສະນັ້ນ, ເພິ່ນຈະຮູ້ສຶກວ່າເປັນຄົນແປກໜ້າໃນໂລກຄ້າຍກັບຢູ່ປົນກັບຄົນບາບໃນບ້ານຂອງຕົນ. ຄົນບາບຊົ່ວຮ້າຍອ້ອມຂ້າງດູຖູກ ນິນທາວ່າຮ້າຍເພິ່ນ. ເຂົາແມ້ກະທັ້ງສະແດງທ່າທີອວດດີ; ບໍ່ວ່າໂອ້ອວດຄວາມບາບຂອງເຂົາ ຫຼືຄວາມຍິ່ງຍະໂສໂດຍຄິດວ່າພວກເຂົາດີເກີນທີ່ຈະຕ້ອງການຄໍາແນະນໍາຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ ຜູ້ແຕ່ງເພງສັຣເສີນພົບການບັນເທົາແລະການເລົ້າໂລມຈາກພຣະຄໍາພຣະເຈົ້າໃນຂນະຢູ່ໃນສະພາບແວດລ້ອມທີ່ເຕັມໄປດ້ວຍຄົນປອງຮ້າຍ. ການດໍາເນີນຊີວິດ, ຮັກສາ, ແລະເຊື່ອຟັງພຣະຄໍາພຣະເຈົ້າລຶບລ້າງການຄົດໂກງຊົ່ວຊ້າມາຈາກຄົນທີ່ບໍ່ເຫັນດີເຫັນພ້ອມທີ່ດູຖູກແລະດ່າປ້ອຍເພິ່ນ.

ຜູ້ປະພັນເພງສັຣເສີນຍິນດີຮັບເອົາຂໍ້ຄໍາສັ່ງແລະປາຖນາຢາກຮູ້ການຕັດສິນຂອງພຣະອົງ, ຊຶ່ງເປັນສິ່ງທີ່ມີຄ່າສໍາລັບເພິ່ນ. ແມ້ແຕ່ເມື່ອເພິ່ນຮູ້ສຶກຖືກດູໝິ່ນດ້ວຍຄວາມໂອ້ອວດ, ເພິ່ນໄດ້ເບິ່ງພຣະເຈົ້າຕິຕຽນເຂົາ. ຮຸນແຮງເທົ່າທີ່ອາດຈະຮຸນແຮງທີ່ເພິ່ນໄດ້ຮັບຈາກຝູງຄົນບາບ, ຜູ້ຂຽນເພງສັຣເສີນສແວງຫາທີ່ຈະຢືນຢັດຢູ່ໃນຂໍ້ຄໍາສັ່ງແລະການພິພາກສາຂອງພຣະເຈົ້າ. ທາງຫຼົບໜີພຽງທາງດຽວຂອງເພິ່ນຈາກການຖືກໂຈມຕີໄດ້ງ່າຍໃນໂລກອັນຊົ່ວຮ້າຍນີ້ແມ່ນການນໍາພາຂອງຂໍ້ຄໍາສັ່ງແລະການປ້ອງກັນພັຍຂອງການພິພາກສາອັນຍຸດຕິທັມຂອງພຣະເຈົ້າ.

ຜູ້ຂຽນເພງສັຣເສີນມີຄວາມໝັ້ນໃຈຽບໆວ່າພຣະເຈົ້າຈະເຮັດໃຫ້ທຸກສິ່ງເຂັ້ມແຂງຂຶ້ນ. ດັ່ງນັ້ນຄົນອື່ນປະຕິບັດຕໍ່ເພິ່ນດ້ວຍການດູຖູກແລະທຸບຕີເພິ່ນດ້ວຍຄວາມດູໝິ່ນ, ເພິ່ນຮູ້ວ່ານີ້ເປັນພຽງສະພາບການຊົ່ວຄາວ. ເພິ່ນຊາບວ່າເພິ່ນຮັກສາຂໍ້ຄໍາສັ່ງແລະຄໍາບັນຊາຂອງພຣະເຈົ້າ, ແລະນັ້ນເປັນສິ່ງທີ່ສໍາຄັນຫຼາຍ. ສິ່ງສໍາຄັນທີ່ສຸດບໍ່ແມ່ນຄົນສໍາຄັນທີ່ສັງຄົມຄິດກ່ຽວກັບເພິ່ນ, ແຕ່ແມ່ນສິ່ງທີ່ພຣະເຈົ້າຄິດກ່ຽວກັບເພິ່ນ-ການພິພາກສາຂອງພຣະເຈົ້າ. ແລະເພິ່ນຊາບວ່າພຣະເຈົ້າຊົງພໍພຣະທັຍກັບທາງເລືອກຊີວິດທີ່ພຣະອົງກະທໍາ-ທາງເລືອກທີ່ພຣະອົງຮູ້ແລະເຊື່ອຟັງຂໍ້ຄໍາສັ່ງຂອງພຣະເຈົ້າ.

<u>ການດໍາເນີນຊີວິດໃນທາງຂອງພຣະເຈົ້າບໍ່ແມ່ນທາງທີ່ງ່າຍເລື້ອຍໄປ</u>, <u>ແຕ່ເປັນທາງທີ່ດີທີ່ສຸດສເມີ</u>. ມັນຮຽກຮ້ອງໃຫ້ຜູ້ເຊື່ອຜ່ານຜ່າການປູກຝັງຂອງວັທນາທັມທີ່ເຕັມດ້ວຍບາບທີ່ຫຸ້ມຮັດເຮົາ, ຊຶ່ງພວກເຮົາຕ້ອງສູ້ທົນຕໍ່ການດູຖູກນັ້ນ. ອີກຢ່າງນຶ່ງ ມັນໝາຍຄວາມວ່າພວກເຮົາຈະຕ້ອງປະເຊີນກັບການຂົ່ມເຫັງຕ່າງໆ, ແຕ່ພວກເຮົາສາມາດສູ້ທຸກສິ່ງນີ້ໄດ້ເມື່ອເຮົາໄວ້ວາງໃຈພຣະເຈົ້າແລະດໍາເນີນຊີວິດໃນການເຊື່ອຟັງພຣະຄໍາຂອງພຣະອົງ.

| ການຮູ້ຈັກພຣະເຈົ້າໂດຍທາງພຣະຄໍາຂອງພຣະອົງຊ່ວຍທ່ານປະເຊີນກັບສະຖານະການຕ່າງໆຢ່າງໃດ? |
|---|

## 3. <u>ເພງສັຣເສີນ 119:23-24</u>

*23ພວກຜູ້ປົກຄອງຮ່ວມໃຈກັນປອງຮ້າຍຂ້າພຣະອົງ ແຕ່ຂ້າພຣະອົງຈະໝົກໝົ້ນສຶກສາຂໍ້ຄໍາສັ່ງຂອງພຣະອົງ. 24 ບັນດາພຣະໂອວາດຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້າພຣະອົງ ເປັນທີ່ປຶກສາຂອງຂ້າພຣະອົງ.*

ຜູ້ຂຽນເພງສັຣເສີນບໍ່ໄດ້ປະເຊີນພຽງແຕ່ການດູຖູກຫຼືການປະນາມຢຽບຫຍາມຂອງຄົນທຸກໆວັນເທົ່ານັ້ນ; ເພິ່ນປະສົບກັບການປອງຮ້າຍຂອງພວກຜູ້ປົກຄອງທີ່ຂົ່ມຂູ່ວ່າຈະທໍາຮ້າຍເພິ່ນ. ຕາມປົກກະຕິ, ພຣະຄໍາພຣະເຈົ້າເປັນທີ່ຊື່ນຊອບແລະເປັນທີ່ປຶກສາປະຈໍາ ໃຫ້ທັສນະຄະຕິທີ່ເໝາະສົມເພື່ອປະເຊີນກັບການຂົ່ມເຫັງຕ່າງໆ.

| ມຸມມອງຂອງທ່ານຕໍ່ສິ່ງໃດສິ່ງນຶ່ງປ່ຽນໄປຍ້ອນພຣະຄໍາພຣະເຈົ້າເມື່ອໃດ? |
|---|

ແທນທີ່ຈະຢ້ານກົວການປອງຮ້າຍເພິ່ນ, ຜູ້ແຕ່ງເພງສັຣເສີນໄດ້ເລືອກ “ຄິດກ່ຽວກັບ” ພຣະຄໍາຂອງພຣະເຈົ້າ. ເພິ່ນໄດ້ຕັ້ງໃຈເລືອກທໍາຄວາມຄຸ້ນເຄີຍກັບພຣະຄໍາພຣະເຈົ້າດ້ວຍການອ່ານມັນ; ມັນເປັນທາງເລືອກທ່ອງຈໍາພຣະຄໍາແລະໄຕ່ຕອງ. ການໄຕ່ຕອງ-ການຜ່ານຜ່າບັນຫາຕ່າງໆໃນຄວາມຄິດຂອງທ່ານ-ຮຽກຮ້ອງການທຸ້ມເທເວລາເພື່ອຖ່າຍທອດ

ແລະອະທິຖານກ່ຽວກັບຄວາມຈິງຂອງພຣະເຈົ້າ.

ເພາະວ່າໂລກທີ່ເຮົາອາສັຍຢູ່ເຊື່ອມໂຊມຫຼາຍ, ມັນພຍາຍາມເຈາະຈົງໃສ່ຄວາມຊົ່ວຮ້າຍຢ່າງໃດແລະຄົນອະທັມປະຕິບັດຕໍ່ເຮົາຢ່າງໃດທີ່ເຮົາໄດ້ຮັບ. ໃນເມື່ອວັທນາທັມຂອງເຮົາສືບຕໍ່ທັບຖົມຄຸນຄ່າຄຣິສຕຽນເພື່ອໃຫ້ເປັນທີ່ພໍໃຈຂອງຄົນນອກສາສນາຫຼືຄົນມັກຄວາມສຳລານ, ທີ່ເລືອກປັກໃຈໃສ່ການດູຖູກທີ່ເຂົາໄດ້ຮັບແລະຄຳນາບຂູ່ທີ່ຄົນອື່ນຮ້ອງດ່າເຂົາ. <u>ແຕ່ເມື່ອໃດເຮົາປັກໃຈໃສ່ຄວາມຊົ່ວຮ້າຍຮ້າຍແຮງສໍ່າໃດ, ພວກເຮົາກໍຈະສູນເສັຽມຸມມອງວ່າພຣະເຈົ້າດີພຽງໃດ.</u> ເປັນການສລາດໃນການຢຸດຊືມຊັບເອົາຂ່າວຕ່າງໆແລະຄວາມເຫັນທຸກຢ່າງຈາກຂ່າວຊ່ອງ 24 ຊົ່ວໂມງ; ແທນທີ່ຈະເຮັດແນວນັ້ນ, ພວກເຮົາຄວນໃຫ້ເວລາອ່ານແລະຖ່າຍທອດພຣະຄຳພຣະເຈົ້າຈົນກວ່າຄຳສອນຈະກາຍເປັນສ່ວນນຶ່ງຂອງເນື້ອກາຍເຮົາ. ພຣະຄຳພຣະເຈົ້າປ່ຽນທັສນະຄະຕິຂອງເຮົາ!

ການໄຕ່ຕອງພຣະຄຳພຣະເຈົ້າຮຽກຮ້ອງການເອົາໃຈໃສ່, ຄວາມຕັ້ງໃຈແນ່ວແນ່ໃນລະຍະເວລາການສອນພຣະຄັມພີ. <u>ການອ່ານພຣະຄັມພີໃຫ້ລົມຫາຍໃຈ. ການສຶກສາພຣະຄັມພີໃຫ້ຄວາມເລິກເຊິ່ງ. ການໄຕ່ຕອງພຣະຄຳພຣະເຈົ້າໃຫ້ທັສນະຄະຕິແກ່ເຮົາ</u>. ມັນເປັນການຕັດສິນໃຈເລືອກດ້ວຍຄວາມຕັ້ງໃຈເພື່ອຈະພົບພຣະເຈົ້າໃນພຣະຣາຊກິດການປ່ຽນແປງເຮົາສູ່ຮູບຮ່າງຂອງພຣະຄຣິດ. ການໃຊ້ທີ່ມີຄຸນນະພາບໃນພຣະຄຳພຣະເຈົ້າປ່ຽນວິທີຄິດຂອງເຮົາແລະຕອບສນອງຊີວິດ.

ເວລາເຮົາໄຕ່ຕອງພຣະຄຳພຣະເຈົ້າ, ມັນຈະກາຍເປັນຄວາມນິຍົມຊົມຊອບຂອງຊີວິດເຮົາ, ຜູ້ປຶກສາປະຈຳຊຶ່ງນຳພາການຕັດສິນໃຈຂອງເຮົາ. ພຣະຄັມພີມີຄ່າສົມກັບເວລາຂອງເຮົາ. ມັນພິສູດໃຫ້ເຫັນການນຳພາທີ່ຖືກຕ້ອງສຳລັບຊີວິດແລະຈັດຕຽມເຮົາໃຫ້ຕັດສິນໃຈເລືອກຢ່າງສລາດພາຍໃຕ້ຄວາມກົດດັນແລະກະທັ້ງການຂົ່ມເຫັງ.

| |
|---|
| ມີການທ້າທາຍທີ່ເຮົາປະເຊີນຫຍັງແດ່ໃນການນຳເອົາທັສນະຄະຕິຂອງພຣະເຈົ້າໃຫ້ປະຕິບັດຕາມໃນຊີວິດເຮົາ? |

**ນຳໃຊ້ໃນຊີວິດ**

ທ່ານຈະມີວິນັຍໃນການໃຊ້ເວລາກັບພຣະຄຳພຣະເຈົ້າຢ່າງໃດ? ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ອ່ານພຣະຄັມພີ.** ຖ້າທ່ານບໍ່ໃຊ້ເວລາກັບພຣະຄຳພຣະເຈົ້າ, ຈົ່ງເລີ່ມທີ່ນີ້ແລະດຽວນີ້. ໃຊ້ເວລາຢ່າງໜ້ອຍ 15 ນາທີອ່ານພຣະຄຳພຣະເຈົ້າທຸກວັນ.
- **ສຶກສາພຣະຄັມພີ.** ຈົ່ງເລືອກປຶ້ມພຣະຄັມພີຫົວນຶ່ງແລະໃຊ້ເວລາສຶກສາຂໍ້ຄວາມຂອງມັນ. ສິດຍາພິບານຫຼືຜູ້ນຳກຸ່ມຂອງທ່ານສາມາດແນະນຳປຶ້ມບັລຍາຍຫຼືປຶ້ມຊ່ອຍສຶກສາເພື່ອຊ່ອຍທ່ານໃນການສຶກສາຂອງທ່ານ.
- **ໄຕ່ຕອງພຣະຄຳພຣະເຈົ້າ.** ຈົ່ງປິດທີວີ, ຄອມພິວເຕີ, ຫຼື ມືຖືແລະໃຊ້ເວລາທີ່ຈະບໍ່ຖືກລົບກວນໄຕ່ຕອງພຣະຄຳພຣະເຈົ້າ. ຈົ່ງບັນທຶກຄວາມຄິດແລະຂໍ້ຄິດເຫັນຂອງທ່ານ.

ບໍ່ເໝືອນ GPS ຊຶ່ງບາງຄັ້ງອາສັຍບໍ່ໄດ້, ພຣະຄັມພີອາສັຍໄດ້ຕລອດ. ມັນຈະໃຫ້ທິດທາງ, ການນຳພາ, ແລະແນວຄິດທີ່ທ່ານຕ້ອງການທີ່ຈະກ້າວເດີນໄປໃນໂລກທີ່ເຕັມໄປດ້ວຍຄວາມບາບນີ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**